


# ບົດລາຍງານສະພາບ
# ອັດຕາເງິນເຟີ້
# ປະຈຳເດືອນ ກໍລະກົດ 2024

ກະຊວງ ແຜນການ ແລະ ການລົງທຶນ
ສູນສະຖິຕິແຫ່ງຊາດ

ນະຄອນຫຼວງວຽງຈັນ 2024

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ແຜນການ ແລະ ການລົງທຶນ

ສູນສະຖິຕິແຫ່ງຊາດ ເລກທີ: 296 /ສຖຕ2.2

ນະຄອນຫຼວງວຽງຈັນ, ວັນທີ: 24 ກໍລະກົດ 2024

## ດັດຊະນີລາຄາການຊົມໃຊ້ ແລະ ອັດຕາເງິນເຟີ້ ຂອງສປປ ລາວ ປະຈໍາເດືອນ ກໍລະກົດ 2024

ການຊົມໃຊ້ແບ່ງຕາມໝວດລະຫັດຈັດແບ່ງສ່ວນບຸກຄົນຕາມຈຸດປະສົງ “COICOP” ເດືອນທັນວາ 2015 ເປັນເດືອນ/ປີ ອ້າງອີງປຽບທຽບ ຫຼື ປີ 2015, ເດືອນທັນວາ ດັດຊະນີ = 100.

| COICOP | ໝວດສິນຄ້າ ແລະ ບໍລິການ | ດັດຊະນີລາຄາການຊົມໃຊ້ | | ອັດຕາເງິນເຟີ້ | | | | |
|---|---|---|---|---|---|---|---|---|
| | | | | ເດືອນຕໍ່ເດືອນ (%) | | ປີຕໍ່ປີ (%) | | |
| | | 2024 | | 2024 | | 2023 | 2024 | |
| | | ມິຖຸນາ | ກໍລະກົດ | ມິຖຸນາ | ກໍລະກົດ | ກໍລະກົດ | ມິຖຸນາ | ກໍລະກົດ |
| 1 | ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ | 252,3 | 255,7 | 2,0 | 1,3 | 37,8 | 23,7 | 23,4 |
| 2 | ໝວດເຫຼົ້າ ແລະ ຢາສູບ | 199,6 | 204,3 | 1,7 | 2,4 | 21,9 | 28,8 | 29,4 |
| 3 | ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ | 229,9 | 234,5 | 1,6 | 2,0 | 28,5 | 29,5 | 27,9 |
| 4 | ໝວດທີ່ພັກອາໄສ, ນໍ້າປະປາ,ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ | 200,0 | 203,6 | 5,1 | 1,8 | 16,8 | 32,5 | 34,1 |
| 5 | ໝວດເຄື່ອງໃຊ້ໃນເຮືອນ | 219,8 | 227,4 | 3,7 | 3,4 | 24,7 | 28,0 | 30,1 |
| 6 | ໝວດຮັກສາສຸຂະພາບ ແລະ ຢາ | 251,5 | 260,6 | 2,8 | 3,6 | 20,8 | 41,7 | 39,9 |
| 7 | ໝວດຄົມມະນາຄົມ ແລະ ການຂົນສົ່ງ | 251,2 | 260,7 | 2,7 | 3,8 | 14,5 | 26,7 | 26,2 |
| 8 | ໝວດໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | 139,3 | 140,5 | 0,5 | 0,8 | 9,7 | 3,5 | 4,1 |
| 9 | ໝວດການບັນເທີງ ແລະ ການພັກຜ່ອນ | 167,6 | 172,3 | 1,6 | 2,8 | 12,2 | 25,2 | 26,2 |
| 10 | ໝວດການສຶກສາ | 147,2 | 151,3 | 2,8 | 2,8 | 4,3 | 24,7 | 27,8 |
| 11 | ໝວດຮ້ານອາຫານ ແລະ ໂຮງແຮມ | 225,9 | 233,2 | 1,3 | 3,2 | 32,8 | 35,3 | 34,4 |
| 12 | ໝວດສິນຄ້າ ແລະ ການບໍລິການອື່ນໆ | 232,8 | 242,8 | 4,3 | 4,3 | 15,0 | 29,6 | 33,0 |
| | **ດັດຊະນີລາຄາການຊົມໃຊ້ລວມ** | **234,5** | **239,8** | **2,3** | **2,2** | **27,8** | **26,2** | **26,1** |

ຄິດໄລ່ໂດຍ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ, ກຜທ.

ຮອງ ແທນ **ຫົວໜ້າສູນສະຖິຕິແຫ່ງຊາດ**

ກະຊວງແຜນການ ແລະ ການລົງທຶນ
ສູນສະຖິຕິແຫ່ງຊາດ

**ເລື່ອນ ສິນສີວິໄລ**



สแกนด้วย CamScanner

## I. ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ເດືອນກໍລະກົດ 2024 ຍັງສືບຕໍ່ເໜັງຕີງເພີ່ມຂຶ້ນຈາກເດືອນຜ່ານມາ ຢູ່ໃນລະດັບ 26,1% (ເດືອນມິຖຸນາ 2024 ຢູ່ໃນລະດັບ 26,2%). ໃນນັ້ນ, ໝວດສິນຄ້າທີ່ມີອັດຕາເງິນເຟີ້ເພີ່ມຂຶ້ນສູງແມ່ນ ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 39,9%, ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 34,4%, ໝວດທີ່ພັກອາໄສ, ນໍ້າປະປາ,ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ເພີ່ມຂຶ້ນ 34,1%, ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 30,1%, ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ 29,4%, ສໍາລັບໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ ເພີ່ມຂຶ້ນ 23,4%.

ເມື່ອສັງເກດການປ່ຽນແປງຂອງລາຄາເດືອນ ກໍລະກົດ 2024 ໃສ່ກັບ ເດືອນ ຜ່ານມາ ເຫັນວ່າອັດຕາເງິນເຟີ້ຍັງມີທ່າອ່ຽງເໜັງຕີງເພີ່ມຂຶ້ນຢູ່ໃນລະດັບ 2,2% (ເດືອນມິຖຸນາ ເພີ່ມຂຶ້ນ 2,3%). ໃນນັ້ນ, ໝວດສິນຄ້າທີ່ມີການປ່ຽນແປງຫຼາຍແມ່ນ ໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນ 3,8%, ພົ້ນເດັ່ນແມ່ນລາຄາ ນໍ້າມັນເຊື້ອໄຟ (3,7%), ລົດໃຫຍ່ (3,9%), ລົດຈັກ (2,7%), ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 3,6% ພົ້ນເດັ່ນແມ່ນ ລາຄາ ຢາປາຣາ (3,6%), ຢາແກ້ໄຂ້ເດັກນ້ອຍ (3,8%), ຢາແກ້ໄອເດັກນ້ອຍ (3,6%), ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 3,4% ພົ້ນເດັ່ນແມ່ນ ແອເຢັນ (11,5%), ແຟັບ (10,5%), ພັດລົມ (7,1%), ຕູ້ເຢັນ (6,2%), ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 3,2% ພົ້ນເດັ່ນແມ່ນລາຄາ ປີ້ງໄກ່ (7%) ເຝີ (3,5%) ເຂົ້າພັດ (2,5%).

❖ **ລາຍລະອຽດການປ່ຽນແປງຂອງລາຄາສິນຄ້າ ແລະ ບໍລິການ ໃນແຕ່ລະໝວດມີດັ່ງນີ້:**

### 1.1 ການປ່ຽນແປງລາຄາສິນຄ້າເດືອນ ກໍລະກົດ 2024 ທຽບກັບເດືອນ ມິຖຸນາ 2024

ການປ່ຽນແປງຂອງລາຄາສິນຄ້າ ແລະ ບໍລິການເດືອນ ກໍລະກົດ 2024 ທຽບກັບເດືອນຜ່ານມາ ເພີ່ມຂຶ້ນ 2,2% ລາຍລະອຽດບາງໝວດສິນຄ້າດັ່ງນີ້:

- **ໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ມີທາດເຫຼົ້າ**: ເພີ່ມຂຶ້ນ 1,3% ໃນນີ້, ລາຄາ ເຂົ້າສານ ເພີ່ມຂຶ້ນ 1,6%, ຊີ້ນ ເພີ່ມຂຶ້ນ 0,6% ໃນນັ້ນ ຊີ້ນໝູ ເພີ່ມຂຶ້ນ 1,4%, ປາ ແລະ ອາຫານທະເລ ເພີ່ມຂຶ້ນ 2,2%, ໝາກໄມ້ ເພີ່ມຂຶ້ນ 2,3%, ເຄື່ອງດື່ມບໍ່ມີທາດເຫຼົ້າ ເພີ່ມຂຶ້ນ 2,7%; ຂະນະດຽວກັນຜັກສົດຫຼຸດລົງເລັກໜ້ອຍ -0,6%;
- **ໝວດເຫຼົ້າ ແລະ ຢາສູບ:** ເພີ່ມຂຶ້ນ 2,4% ໃນນີ້, ລາຄາເຫຼົ້າ ເພີ່ມຂຶ້ນ 6,7%, ວາຍ ເພີ່ມຂຶ້ນ 1,2%, ເບຍ ເພີ່ມຂຶ້ນ 1,2%, ຢາສູບ ເພີ່ມຂຶ້ນ 3,1%;
- **ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ:** ເພີ່ມຂຶ້ນ 2% ໃນນີ້, ລາຄາເສື້ອຜ້າ ເພີ່ມຂຶ້ນ 2,1%, ປະເພດເຄື່ອງນຸ່ງຫົ່ມ ເພີ່ມຂຶ້ນ 2,1%, ໃນນີ້ ເຄື່ອງນຸ່ງຊາຍ ເພີ່ມຂຶ້ນ 2,9%, ເຄື່ອງນຸ່ງຍິງ ເພີ່ມຂຶ້ນ 1,5%, ເຄື່ອງນຸ່ງເດັກນ້ອຍ ເພີ່ມຂຶ້ນ 3,7%, ເກີບ ເພີ່ມຂຶ້ນ 1,3%;
- **ໝວດທີ່ພັກອາໄສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ:** ເພີ່ມຂຶ້ນ 1,8% ໃນນີ້, ການບໍາລຸງຮັກສາ ແລະ ສ້ອມແປງເຮືອນ ເພີ່ມຂຶ້ນ 2,8%, ການບໍລິການກໍ່ສ້າງ ແລະ ສ້ອມແປງ ເພີ່ມຂຶ້ນ 2,3%, ພະລັງງານອາຍແກັສ໌ ແລະ ເຊື້ອເພີງຫຸງຕົ້ມ ເພີ່ມຂຶ້ນ 1,7%;
- **ໝວດເຄື່ອງໃຊ້ໃນເຮືອນ**: ເພີ່ມຂຶ້ນ 3,4% ໃນນີ້, ລາຄາ ເຄື່ອງຕົບແຕ່ງພາຍໃນເຮືອນ ເພີ່ມຂຶ້ນ 1,9%, ເຄື່ອງໃຊ້ຄົວເຮືອນ ເພີ່ມຂຶ້ນ 4,3%, ເຄື່ອງໃຊ້ໃນເຮືອນປະຈໍາວັນ ເພີ່ມຂຶ້ນ 3,5% ອຸປະກອນປະດັບເຮືອນ ເພີ່ມຂຶ້ນ 4,6%;

- **ໝວດຮັກສາສຸຂະພາບ ແລະ ຢາ:** ເພີ່ມຂຶ້ນ 3,6% ໃນນີ້, ລາຄາຢາ ເພີ່ມຂຶ້ນ 3,7%, ການບໍລິການຄົນເຈັບພາຍນອກ ເພີ່ມຂຶ້ນ 1,9%, ການບໍລິການຈາກໂຮງໝໍ ຫຼື ຄຣີນິກ ເພີ່ມຂຶ້ນ 3,9%;
- **ໝວດຄົມມະນາຄົມ ແລະ ການຂົນສົ່ງ:** ເພີ່ມຂຶ້ນ 3,8% ໃນນີ້, ພາຫະນະຂົນສົ່ງ ເພີ່ມຂຶ້ນ 3,8%, ອຸປະກອນການຂົນສົ່ງ ເພີ່ມຂຶ້ນ 3,8%, ໃນນັ້ນ, ນໍ້າມັນເຊື້ອໄຟ ເພີ່ມຂຶ້ນ 3,7%, ການບໍລິການຂົນສົ່ງ ເພີ່ມຂຶ້ນ 3,9%;
- **ໝວດຮ້ານອາຫານ ແລະ ໂຮງແຮມ:** ເພີ່ມຂຶ້ນ 3,2% ໃນນີ້, ລາຄາອາຫານ ແລະ ເຄື່ອງດື່ມໃນຮ້ານອາຫານ ເພີ່ມຂຶ້ນ 3,7% ເຊັ່ນ: ປີ້ງປານິນ, ເຂົ້າຜັດ, ເຂົ້າລາດໜ້າ, ເຂົ້າປຽກ, ເຂົ້າຜັດໝູ, ເບຍ, ວາຍ ແລະ ວິສ໌ກີ, ເຮືອນພັກ ແລະ ໂຮງແຮມ ເພີ່ມຂຶ້ນ 0,4%;
- **ໝວດສິນຄ້າ ແລະ ບໍລິການອື່ນໆ:** ເພີ່ມຂຶ້ນ 4,3% ໃນນີ້, ເຄື່ອງໃຊ້ປະຈໍາວັນ ເພີ່ມຂຶ້ນ 3,9%, ຄໍາສໍາເລັດຮູບ ເພີ່ມຂຶ້ນ 6,4%.

### 1.2 ການປ່ຽນແປງລາຄາສິນຄ້າເດືອນ ກໍລະກົດ 2024 ທຽບກັບເດືອນ ກໍລະກົດ 2023

ການປ່ຽນແປງປີຕໍ່ປີ ຫຼື ອັດຕາເງິນເຟີ້ລວມ ຂອງ ສປປລາວເດືອນ ກໍລະກົດ 2024 ທຽບກັບເດືອນດຽວກັນຂອງ ປີຜ່ານມາ ເພີ່ມຂຶ້ນ 26,1% ເຊິ່ງການເໜັງຕີງຂອງບາງໝວດສິນຄ້າ ແລະ ບໍລິການ ມີລາຍລະອຽດດັ່ງລຸ່ມນີ້:

- **ໝວດອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ:** ເພີ່ມຂຶ້ນ 23,4% ໃນນີ້, ລາຄາເຂົ້າສານ ເພີ່ມຂຶ້ນ 18,7%, ຊີ້ນ ເພີ່ມຂຶ້ນ 15,4% ໃນນັ້ນ ຊີ້ນໝູ ເພີ່ມຂຶ້ນ 6,3%, ຊີ້ນງົວ ແລະ ຄວາຍ ເພີ່ມຂຶ້ນ 14,6%, ສັດປີກ ເພີ່ມຂຶ້ນ 30,3%, ປາ ແລະ ອາຫານທະເລ ເພີ່ມຂຶ້ນ 22,5%, ໝາກໄມ້ ເພີ່ມຂຶ້ນ 34,7%, ຜັກສົດ ເພີ່ມຂຶ້ນ 36,2%, ປະເພດເຄື່ອງດື່ມບໍ່ມີທາດເຫຼົ້າ ເພີ່ມຂຶ້ນ 37%;
- **ໝວດເຫຼົ້າ ແລະ ຢາສູບ:** ເພີ່ມຂຶ້ນ 29,4% ໃນນີ້, ລາຄາເຫຼົ້າ ເພີ່ມຂຶ້ນ 42,1%, ວາຍ ເພີ່ມຂຶ້ນ 16,1%, ເບຍ ເພີ່ມຂຶ້ນ 31,1%, ຢາສູບ ເພີ່ມຂຶ້ນ 22,3%;
- **ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ:** ເພີ່ມຂຶ້ນ 27,9% ໃນນີ້, ລາຄາເສື້ອຜ້າ ເພີ່ມຂຶ້ນ 29,2%, ປະເພດເຄື່ອງນຸ່ງຫົ່ມ ເພີ່ມຂຶ້ນ 29,3%, ໃນນີ້ ເຄື່ອງນຸ່ງຊາຍ ເພີ່ມຂຶ້ນ 32,4%, ເຄື່ອງນຸ່ງຍິງ ເພີ່ມຂຶ້ນ 27,9%, ເຄື່ອງນຸ່ງເດັກນ້ອຍ ເພີ່ມຂຶ້ນ 23,4%, ເກີບ ເພີ່ມຂຶ້ນ 17,8%;
- **ໝວດທີ່ພັກອາໄສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ:** ເພີ່ມຂຶ້ນ 34,1% ໃນນີ້, ລາຄາເຮືອນໃຫ້ເຊົ່າ ເພີ່ມຂຶ້ນ 9,7%, ການບໍາລຸງຮັກສາ ແລະ ສ້ອມແປງເຮືອນ ເພີ່ມຂຶ້ນ 27,5%, ພະລັງງານອາຍແກັສ໌ ແລະ ເຊື້ອເພີງຫຸງຕົ້ມ ເພີ່ມຂຶ້ນ 41,2%;
- **ໝວດເຄື່ອງໃຊ້ໃນເຮືອນ:** ເພີ່ມຂຶ້ນ 30,1% ໃນນີ້, ລາຄາເຄື່ອງຕົບແຕ່ງພາຍໃນເຮືອນ ເພີ່ມຂຶ້ນ 25,9%, ເຄື່ອງໃຊ້ຄົວເຮືອນ ເພີ່ມຂຶ້ນ 30,9%, ເຄື່ອງໃຊ້ເຮືອນປະຈໍາວັນ ເພີ່ມຂຶ້ນ 33,9%;
- **ໝວດຮັກສາສຸຂະພາບ ແລະ ຢາ:** ເພີ່ມຂຶ້ນ 39,9% ໃນນີ້, ລາຄາຢາ ເພີ່ມຂຶ້ນ 44,7%, ການບໍລິການຄົນເຈັບພາຍນອກ ເພີ່ມຂຶ້ນ 16,9%, ການບໍລິການຈາກໂຮງໝໍ ຫຼື ຄຣີນິກ ເພີ່ມຂຶ້ນ 14,6%;
- **ໝວດຄົມມະນາຄົມ ແລະ ການຂົນສົ່ງ:** ເພີ່ມຂຶ້ນ 26,2% ໃນນີ້, ລາຄາພາຫະນະຂົນສົ່ງ ເພີ່ມຂຶ້ນ 26%, ອຸປະກອນການຂົນສົ່ງ ເພີ່ມຂຶ້ນ 26,5%, ໃນນັ້ນ, ນໍ້າມັນເຊື້ອໄຟ ເພີ່ມຂຶ້ນ 22,7%, ການບໍລິການຂົນສົ່ງ ເພີ່ມຂຶ້ນ 27%;
- **ໝວດຮ້ານອາຫານ ແລະ ໂຮງແຮມ:** ເພີ່ມຂຶ້ນ 34,4% ໃນນີ້, ລາຄາອາຫານ ແລະ ເຄື່ອງດື່ມໃນຮ້ານອາຫານ ເພີ່ມຂຶ້ນ 35,8% ເຊັ່ນ: ເຂົ້າຜັດ,ປີ້ງປານິນ, ເຂົ້າປຽກ, ເຂົ້າຜັດໝູ, ເຂົ້າລາດໜ້າ, ວາຍ ແລະ ວິສ໌ກີ; ປະເພດເຮືອນພັກ ແລະ ໂຮງແຮມ ເພີ່ມຂຶ້ນ 26,6%;

- **ໝວດສິນຄ້າ ແລະ ບໍລິການອື່ນໆ:** ເພີ່ມຂຶ້ນ 33% ໃນນີ້, ເຄື່ອງໃຊ້ປະຈຳວັນ ເພີ່ມຂຶ້ນ 30,4%, ຄຳສຳເລັດຮູບ ເພີ່ມຂຶ້ນ 63%.

## II. ສະພາບອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ

ອັດຕາເງິນເຟີ້ພື້ນຖານ ແມ່ນໄດ້ຄິດໄລ່ ຈາກ 402 ລາຍການ ກວມເອົາ 82,9% ຂອງລາຍການສິນຄ້າ ແລະ ບໍລິການທັງໝົດ ແລະ ກວມເອົານ້ຳໜັກການຊົມໃຊ້ 55,6%. ອັດຕາເງິນເຟີ້ພື້ນຖານ ໃນເດືອນກໍລະກົດ 2024 ຢູ່ໃນລະດັບ 28,9% ຕົ້ນຕໍແມ່ນການເພີ່ມຂຶ້ນ ຂອງອາຫານສຳເລັດຮູບ ແລະ ທາດແປ້ງ, ເຄື່ອງປຸງແຕ່ງອາຫານ, ເຄື່ອງດື່ມບໍ່ແມ່ນເຫຼົ້າ, ໝວດເຫຼົ້າ ແລະ ຢາສູບເຄື່ອງນຸ່ງຫົ່ມ ແລະ ເກີບ, ເຄື່ອງກໍ່ສ້າງ ແລະ ອຸປະກອນສ້ອມແປງເຮືອນ, ແລະ ໝວດເຄື່ອງໃຊ້ໃນເຮືອນ.

ສຳລັບອັດຕາເງິນເຟີ້ທີ່ບໍ່ແມ່ນພື້ນຖານ ແມ່ນຄິດໄລ່ຈາກ 83 ລາຍການ ກວມເອົາ 17,1% ຂອງລາຍການສິນຄ້າ ແລະ ບໍລິການທັງໝົດ ແລະ ກວມເອົານ້ຳໜັກການຊົມໃຊ້ 44,4%. ອັດຕາເງິນເຟີ້ທີ່ບໍ່ແມ່ນພື້ນຖານ ເດືອນກໍລະກົດ 2024 ຢູ່ໃນລະດັບ 23,2% ຕົ້ນຕໍແມ່ນການເພີ່ມຂຶ້ນຂອງອາຫານສົດ, ນ້ຳມັນເຊື້ອໄຟ.

## III. ສະພາບອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ

ອັດຕາເງິນເຟີ້ສິນຄ້າພາຍໃນ ແມ່ນ ຄິດໄລ່ຈາກ 230 ລາຍການ ກວມເອົາ 47.4% ຂອງລາຍການສິນຄ້າທັງໝົດ ແລະ ກວມເອົານ້ຳໜັກ 69.3%. ອັດຕາເງິນເຟີ້ສິນຄ້າພາຍໃນ ເດືອນກໍລະກົດ 2024 ຢູ່ໃນລະດັບ 25,5% ຕົ້ນຕໍແມ່ນການເພີ່ມຂຶ້ນຂອງລາຄາ ປະເພດອາຫານສົດ ເຊັ່ນ: ເຂົ້າສານ, ຊີ້ນ, ໝາກໄມ້, ຜັກສົດ ເຫຼົ່ານີ້ເປັນຕົ້ນ.

ສຳລັບອັດຕາເງິນເຟີ້ສິນຄ້ານຳເຂົ້າ ແມ່ນຄິດໄລ່ຈາກ 255 ລາຍການ ກວມເອົາ 52.6% ຂອງລາຍການສິນຄ້າທັງໝົດ ແລະ ກວມເອົານ້ຳໜັກ 30.7%. ອັດຕາເງິນເຟີ້ສິນຄ້ານຳເຂົ້າ ເດືອນກໍລະກົດ 2024 ຢູ່ໃນລະດັບ 27,5% ຕົ້ນຕໍແມ່ນການເໜັງຕີງເພີ່ມຂຶ້ນຂອງ ເຄື່ອງນຸ່ງຫົ່ມເຄື່ອງໃຊ້ໃນເຮືອນ, ເຄື່ອງເອເລັກໂຕນິກຕ່າງໆ.

[1] **ອັດຕາເງິນເຟີ້ພື້ນຖານ "Core-CPI"**: ແມ່ນລາຍການຜະລິດຕະພັນສິນຄ້າທີ່ເໜັງຕີງປົກກະຕິ ແລະ ບາງລາຍການສິນຄ້າແມ່ນທີ່ຢູ່ໃນ ກອບການຄວບຄຸມຂອງລັດຖະບານ ເປັນປະເພດສິນຄ້າທີ່ບໍ່ອ່ອນໄຫວໄວ ມີຈຳນວນ 402 ລາຍການ ໃນກອບຕົວແທນທັງໝົດ. ປະກອບມີ: ອາຫານສຳເລັດຮູບ ແລະທາດແປ້ງ, ເຄື່ອງປຸງແຕ່ງອາຫານ, ເຄື່ອງດື່ມບໍ່ແມ່ນເຫຼົ້າ, ໝວດເຫຼົ້າ ແລະຢາສູບ, ເຄື່ອງນຸ່ງ ແລະເກີບ, ເຄື່ອງກໍ່ສ້າງ ແລະອຸປະກອນສ້ອມແປງເຮືອນ, ໝວດເຄື່ອງໃຊ້ໃນເຮືອນ, ໝວດຮັກສາສຸຂະພາບ ແລະ ຢາ, ລົດ ແລະເຄື່ອງອາໄຫຼ່ລົດ, ບໍລິການໂດຍສານ, ໝວດການສຶກສາ, ບັນເທີງພັກຜ່ອນ ແລະ ເຄື່ອງໃຊ້ສ່ວນຕົວ ເຊິ່ງ ກວມ 82,9% ຂອງລາຍການສິນຄ້າ ແລະ ບໍລິການທັງໝົດ ແລະ ກວມເອົານ້ຳໜັກການຊົມໃຊ້ 55.6%.

[2] **ອັດຕາເງິນຟີ້ບໍ່ເປັນພື້ນຖານ "Noncore-CPI"**: ແມ່ນລາຍການຜະລິດຕະພັນປະເພດສິນຄ້າອ່ອນໄຫວໄວ, ມີການເໜັງຕີງຂຶ້ນລົງໄລຍະສັ້ນ ມີຈຳນວນ 83 ລາຍການ ໃນກອບຕົວແທນທັງໝົດ ປະກອບມີ ອາຫານສົດ, ຄ່າໄຟຟ້າ, ແກັສ໌, ນ້ຳມັນເຊື້ອໄຟ ແລະ ຄຳຮູບປະພັນ ເຊິ່ງ ກວມ 17,1% ຂອງລາຍການສິນຄ້າ ແລະ ບໍລິການທັງໝົດ ແລະ ກວມເອົານ້ຳໜັກການຊົມໃຊ້ 44,4%.

# ຮູບສະແດງຊ້ອນທ້າຍ

**ຮູບສະແດງ 01:** ອັດຕາເງິນເຟີ້ລວມ ແລະການປະກອບສ່ວນຂອງອັດຕາເງິນເຟີ້ພື້ນຖານແລະ ບໍ່ເປັນພື້ນຖານຕໍ່ເງິນເຟີ້ລວມ (ປີຕໍ່ປີ, %)




**ຮູບສະແດງ 02:** ອັດຕາເງິນເຟີ້ເດືອນຕໍ່ເດືອນ ແລະ ການປະກອບສ່ວນຂອງບາງໝວດສິນຄ້າຕົ້ນຕໍ (%)



**ຮູບສະແດງ 03:** ອັດຕາເງິນເຟີ້ອາຫານ ແລະ ບໍ່ແມ່ນອາຫານ, ສິນຄ້າພາຍໃນ ແລະ ນຳເຂົ້າ (%)



# ຕາຕະລາງຊ້ອນທ້າຍ

**ຕາຕະລາງ 01:** ດັດຊະນີລາຄາແບ່ງຕາມໝວດສິນຄ້າ ແລະ ກຸ່ມສິນຄ້າຕົ້ນຕໍ

| Coicop | ໝວດສິນຄ້າ | 2023 | | | | | | | 2024 | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ |
| 01 | ໝວດ ສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ | 203,96 | 207,10 | 213,28 | 219,56 | 222,79 | 221,43 | 220,62 | 226,26 | 231,14 | 233,65 | 236,66 | 247,28 | 252,31 | 255,65 |
| 02 | ໝວດ ເຫຼົ້າ ແລະ ຢາສູບ | 154,99 | 157,92 | 160,53 | 164,07 | 170,09 | 173,00 | 176,90 | 177,75 | 182,69 | 187,18 | 191,34 | 196,18 | 199,58 | 204,29 |
| 03 | ໝວດ ເຄື່ອງນຸ່ງຫົ່ມ ແລະ ເກີບ | 177,53 | 183,38 | 187,53 | 194,93 | 199,13 | 206,02 | 209,67 | 211,40 | 216,59 | 219,08 | 223,88 | 226,22 | 229,89 | 234,50 |
| 04 | ໝວດ ທີ່ພັກອາໄສ, ໄຟຟ້າ, ນໍ້າປະປາ ແລະ ເຊື້ອເພີງຫຸງຕົ້ມ | 150,90 | 151,84 | 153,11 | 157,10 | 161,25 | 164,77 | 167,78 | 169,14 | 174,35 | 178,10 | 183,88 | 190,23 | 199,98 | 203,63 |
| 05 | ໝວດ ເຄື່ອງໃຊ້ໃນເຮືອນ | 171,73 | 174,75 | 176,96 | 183,01 | 187,00 | 190,91 | 195,55 | 197,30 | 201,43 | 205,97 | 208,15 | 212,03 | 219,81 | 227,36 |
| 06 | ໝວດ ຮັກສາສຸຂະພາບ ແລະ ຢາ | 177,45 | 186,27 | 191,93 | 201,22 | 208,81 | 214,32 | 220,44 | 225,17 | 228,84 | 233,58 | 239,09 | 244,53 | 251,49 | 260,61 |
| 07 | ໝວດ ຄົມມະນາຄົມ ແລະ ຂົນສົ່ງ | 198,27 | 206,64 | 211,32 | 223,12 | 233,53 | 236,05 | 232,48 | 230,13 | 235,78 | 237,27 | 241,82 | 244,46 | 251,17 | 260,73 |
| 08 | ໝວດ ໄປສະນີ ແລະ ໂທລະຄົມມະນາຄົມ | 134,65 | 134,92 | 135,74 | 136,13 | 136,59 | 136,83 | 137,03 | 137,44 | 137,73 | 138,20 | 138,40 | 138,63 | 139,32 | 140,46 |
| 09 | ໝວດ ບັນເທີງ ແລະ ການພັກຜ່ອນ | 133,85 | 136,49 | 139,80 | 143,80 | 146,52 | 149,18 | 150,27 | 152,80 | 156,32 | 160,14 | 162,58 | 164,88 | 167,59 | 172,27 |
| 10 | ໝວດ ການສຶກສາ | 118,02 | 118,38 | 119,31 | 126,32 | 130,49 | 132,63 | 133,05 | 134,96 | 137,02 | 140,07 | 141,92 | 143,24 | 147,19 | 151,29 |
| 11 | ໝວດ ຮ້ານອາຫານ ແລະ ໂຮງແຮມ | 166,93 | 173,47 | 180,18 | 186,63 | 192,77 | 198,37 | 202,54 | 206,56 | 208,95 | 214,21 | 216,84 | 222,93 | 225,85 | 233,16 |
| 12 | ໝວດ ສິນຄ້າ ແລະ ບໍລິການອື່ນໆ | 179,69 | 182,55 | 185,66 | 189,03 | 194,42 | 198,75 | 200,00 | 201,25 | 204,87 | 210,24 | 218,39 | 223,19 | 232,84 | 242,76 |
| **01-12** | **ລວມ** | **185,92** | **190,15** | **195,10** | **201,87** | **206,75** | **208,13** | **208,37** | **211,46** | **215,95** | **218,83** | **222,38** | **229,28** | **234,54** | **239,75** |

| ລ/ດ | ກຸ່ມສິນຄ້າຕົ້ນຕໍ | 2023 | | | | | | | 2024 | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ |
| 1 | ດັດຊະນີລາຄາ ພື້ນຖານ | 168,05 | 172,94 | 176,76 | 183,33 | 189,39 | 193,47 | 195,27 | 196,64 | 200,54 | 203,80 | 207,11 | 210,80 | 216,31 | 222,94 |
| 2 | ດັດຊະນີບໍ່ເປັນພື້ນຖານ | 208,27 | 211,67 | 218,03 | 225,05 | 228,45 | 226,46 | 224,74 | 229,99 | 235,21 | 237,61 | 241,47 | 252,37 | 257,33 | 260,76 |
| 3 | ດັດຊະນີອາຫານ | 198,11 | 201,79 | 208,05 | 214,36 | 218,04 | 217,78 | 217,76 | 223,15 | 227,63 | 230,58 | 233,53 | 243,43 | 248,13 | 252,10 |
| 4 | ດັດຊະນີບໍ່ແມ່ນອາຫານ | 171,18 | 176,08 | 179,44 | 186,77 | 193,09 | 196,46 | 197,00 | 197,32 | 201,82 | 204,63 | 208,90 | 212,15 | 218,11 | 224,82 |
| 5 | ດັດຊະນີສິນຄ້າພາຍໃນ | 183,81 | 187,00 | 191,75 | 197,38 | 200,94 | 201,68 | 202,00 | 206,26 | 210,73 | 213,79 | 217,07 | 225,78 | 230,60 | 234,58 |
| 6 | ດັດຊະນີສິນຄ້ານຳເຂົ້າ | 190,70 | 197,29 | 202,69 | 212,02 | 219,88 | 222,71 | 222,76 | 223,21 | 227,75 | 230,22 | 234,39 | 237,18 | 243,45 | 251,44 |

**ຕາຕະລາງ 02:** ການປ່ຽນແປງດັດຊະນີລາຄາ ເດືອນຕໍ່ເດືອນ ແບ່ງຕາມໝວດສິນຄ້າ ແລະ ກຸ່ມສິນຄ້າຕົ້ນຕໍ

| Coicop | ໝວດສິນຄ້າ | 2023 | | | | | | | 2024 | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ |
| 01 | ໝວດ ສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ | 1,55 | 1,53 | 2,98 | 2,94 | 1,47 | -0,61 | -0,37 | 2,56 | 2,15 | 1,08 | 1,29 | 4,49 | 2,04 | 1,32 |
| 02 | ໝວດ ເຫຼົ້າ ແລະ ຢາສູບ | 2,42 | 1,89 | 1,66 | 2,21 | 3,67 | 1,71 | 2,25 | 0,48 | 2,78 | 2,45 | 2,23 | 2,53 | 1,74 | 2,36 |
| 03 | ໝວດ ເຄື່ອງນຸ່ງຫົ່ມ ແລະ ເກີບ | 3,07 | 3,30 | 2,26 | 3,95 | 2,15 | 3,46 | 1,77 | 0,83 | 2,45 | 1,15 | 2,19 | 1,04 | 1,63 | 2,01 |
| 04 | ໝວດ ທີ່ພັກອາໄສ, ໄຟຟ້າ, ນ້ຳປະປາ ແລະ ເຊື້ອເພີງຫຸງຕົ້ມ | 1,02 | 0,63 | 0,83 | 2,61 | 2,64 | 2,19 | 1,83 | 0,81 | 3,08 | 2,15 | 3,25 | 3,45 | 5,13 | 1,83 |
| 05 | ໝວດ ເຄື່ອງໃຊ້ໃນເຮືອນ | 2,32 | 1,76 | 1,27 | 3,42 | 2,18 | 2,09 | 2,43 | 0,89 | 2,09 | 2,25 | 1,06 | 1,86 | 3,67 | 3,44 |
| 06 | ໝວດ ຮັກສາສຸຂະພາບ ແລະ ຢາ | 0,49 | 4,97 | 3,04 | 4,84 | 3,77 | 2,64 | 2,86 | 2,14 | 1,63 | 2,07 | 2,36 | 2,27 | 2,85 | 3,63 |
| 07 | ໝວດ ຄົມມະນາຄົມ ແລະ ຂົນສົ່ງ | 3,58 | 4,22 | 2,26 | 5,59 | 4,66 | 1,08 | -1,51 | -1,01 | 2,45 | 0,63 | 1,92 | 1,09 | 2,74 | 3,81 |
| 08 | ໝວດ ໄປສະນີ ແລະ ໂທລະຄົມມະນາຄົມ | 0,44 | 0,19 | 0,61 | 0,29 | 0,34 | 0,18 | 0,15 | 0,29 | 0,22 | 0,34 | 0,14 | 0,16 | 0,50 | 0,82 |
| 09 | ໝວດ ບັນເທີງ ແລະ ການພັກຜ່ອນ | 0,50 | 1,97 | 2,42 | 2,87 | 1,89 | 1,82 | 0,73 | 1,69 | 2,30 | 2,44 | 1,52 | 1,41 | 1,64 | 2,80 |
| 10 | ໝວດ ການສຶກສາ | 0,20 | 0,31 | 0,78 | 5,88 | 3,30 | 1,64 | 0,32 | 1,44 | 1,52 | 2,23 | 1,32 | 0,93 | 2,76 | 2,79 |
| 11 | ໝວດ ຮ້ານອາຫານ ແລະ ໂຮງແຮມ | 2,26 | 3,92 | 3,87 | 3,58 | 3,29 | 2,90 | 2,11 | 1,98 | 1,16 | 2,52 | 1,23 | 2,81 | 1,31 | 3,24 |
| 12 | ໝວດ ສິນຄ້າ ແລະ ບໍລິການອື່ນໆ | 3,39 | 1,59 | 1,70 | 1,81 | 2,85 | 2,23 | 0,63 | 0,62 | 1,80 | 2,62 | 3,88 | 2,20 | 4,33 | 4,26 |
| **01-12** | **ລວມ** | **1,99** | **2,28** | **2,60** | **3,47** | **2,42** | **0,67** | **0,11** | **1,49** | **2,12** | **1,33** | **1,62** | **3,10** | **2,30** | **2,22** |

| ລ/ດ | ກຸ່ມສິນຄ້າຕົ້ນຕໍ | 2023 | | | | | | | 2024 | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ |
| 1 | ອັດຕາເງິນເຟີ້ ພື້ນຖານ | 2,72 | 2,91 | 2,21 | 3,71 | 3,30 | 2,15 | 0,93 | 0,70 | 1,98 | 1,63 | 1,62 | 1,78 | 2,62 | 3,07 |
| 2 | ອັດຕາເງິນເຟີ້ ບໍ່ເປັນພື້ນຖານ | 1,27 | 1,63 | 3,00 | 3,22 | 1,51 | -0,87 | -0,76 | 2,34 | 2,27 | 1,02 | 1,62 | 4,51 | 1,97 | 1,33 |
| 3 | ອັດຕາເງິນເຟີ້ ອາຫານ | 1,65 | 1,86 | 3,10 | 3,03 | 1,72 | -0,12 | -0,01 | 2,47 | 2,01 | 1,29 | 1,28 | 4,24 | 1,93 | 1,60 |
| 4 | ອັດຕາເງິນເຟີ້ ບໍ່ແມ່ນອາຫານ | 2,47 | 2,86 | 1,91 | 4,08 | 3,38 | 1,75 | 0,28 | 0,16 | 2,28 | 1,39 | 2,09 | 1,56 | 2,81 | 3,08 |
| 5 | ອັດຕາເງິນເຟີ້ ສິນຄ້າພາຍໃນ | 1,71 | 1,73 | 2,54 | 2,94 | 1,80 | 0,37 | 0,16 | 2,11 | 2,17 | 1,45 | 1,53 | 4,01 | 2,14 | 1,73 |
| 6 | ອັດຕາເງິນເຟີ້ ສິນຄ້ານຳເຂົ້າ | 2,61 | 3,46 | 2,74 | 4,60 | 3,71 | 1,29 | 0,02 | 0,20 | 2,03 | 1,09 | 1,81 | 1,19 | 2,64 | 3,28 |

**ຕາຕະລາງ 03:** ການປ່ຽນແປງດັດຊະນີລາຄາ ປີຕໍ່ປີ ແບ່ງຕາມໝວດສິນຄ້າ ແລະ ກຸ່ມສິນຄ້າຕົ້ນຕໍ

| Coicop | ໝວດສິນຄ້າ | 2023 | | | | | | | 2024 | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ |
| 01 | ໝວດ ສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ | 42,74 | 37,81 | 31,85 | 29,38 | 29,00 | 26,44 | 23,96 | 25,26 | 25,49 | 23,61 | 22,00 | 23,12 | 23,70 | 23,44 |
| 02 | ໝວດ ເຫຼົ້າ ແລະ ຢາສູບ | 21,55 | 21,90 | 22,55 | 23,39 | 27,30 | 24,49 | 25,11 | 22,23 | 25,01 | 26,42 | 28,52 | 29,63 | 28,77 | 29,37 |
| 03 | ໝວດ ເຄື່ອງນຸ່ງຫົ່ມ ແລະ ເກີບ | 24,60 | 28,47 | 27,11 | 29,73 | 28,12 | 31,80 | 33,44 | 33,38 | 35,12 | 36,23 | 37,62 | 31,34 | 29,50 | 27,88 |
| 04 | ໝວດ ທີ່ພັກອາໄສ, ໄຟຟ້າ, ນໍ້າປະປາ ແລະ ເຊື້ອເພີງຫຸງຕົ້ມ | 16,80 | 16,84 | 16,14 | 16,50 | 17,98 | 19,22 | 20,39 | 19,06 | 20,37 | 21,86 | 24,26 | 27,34 | 32,53 | 34,11 |
| 05 | ໝວດ ເຄື່ອງໃຊ້ໃນເຮືອນ | 23,94 | 24,71 | 24,51 | 24,29 | 24,37 | 25,27 | 25,94 | 24,50 | 25,76 | 26,39 | 27,08 | 26,33 | 28,00 | 30,11 |
| 06 | ໝວດ ຮັກສາສຸຂະພາບ ແລະ ຢາ | 25,09 | 20,84 | 21,11 | 21,09 | 24,49 | 26,55 | 29,49 | 31,03 | 32,46 | 34,61 | 36,09 | 38,48 | 41,72 | 39,91 |
| 07 | ໝວດ ຄົມມະນາຄົມ ແລະ ຂົນສົ່ງ | 10,96 | 14,50 | 17,68 | 20,75 | 21,07 | 22,14 | 22,34 | 20,02 | 22,59 | 23,58 | 26,12 | 27,70 | 26,68 | 26,18 |
| 08 | ໝວດ ໄປສະນີ ແລະ ໂທລະຄົມມະນາຄົມ | 9,49 | 9,68 | 10,25 | 8,21 | 7,95 | 7,38 | 7,10 | 6,18 | 5,55 | 5,67 | 5,23 | 3,41 | 3,46 | 4,11 |
| 09 | ໝວດ ບັນເທີງ ແລະ ການພັກຜ່ອນ | 11,78 | 12,15 | 14,29 | 16,35 | 17,16 | 18,49 | 18,06 | 17,78 | 19,68 | 21,47 | 22,47 | 23,80 | 25,21 | 26,22 |
| 10 | ໝວດ ການສຶກສາ | 6,06 | 4,30 | 5,05 | 9,86 | 12,18 | 13,54 | 14,00 | 15,32 | 17,02 | 19,28 | 20,73 | 21,61 | 24,72 | 27,80 |
| 11 | ໝວດ ຮ້ານອາຫານ ແລະ ໂຮງແຮມ | 28,78 | 32,80 | 32,79 | 34,37 | 34,57 | 35,25 | 35,88 | 35,98 | 35,13 | 35,90 | 35,28 | 36,57 | 35,30 | 34,41 |
| 12 | ໝວດ ສິນຄ້າ ແລະ ບໍລິການອື່ນໆ | 12,08 | 14,99 | 15,90 | 17,04 | 18,76 | 21,80 | 22,14 | 21,09 | 23,57 | 24,30 | 27,30 | 28,41 | 29,58 | 32,98 |
| **01-12** | **ລວມ** | **28,65** | **27,80** | **25,88** | **25,69** | **25,83** | **25,24** | **24,37** | **24,44** | **25,35** | **24,98** | **24,94** | **25,77** | **26,15** | **26,08** |

| ລ/ດ | ກຸ່ມສິນຄ້າຕົ້ນຕໍ | 2023 | | | | | | | 2024 | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ |
| 1 | ອັດຕາເງິນເຟີ້ ພື້ນຖານ | 19,36 | 21,23 | 21,97 | 23,23 | 24,25 | 25,77 | 26,11 | 25,31 | 26,69 | 27,52 | 28,50 | 28,85 | 28,72 | 28,92 |
| 2 | ອັດຕາເງິນເຟີ້ ບໍ່ເປັນພື້ນຖານ | 39,60 | 35,28 | 30,12 | 28,30 | 27,50 | 24,68 | 22,53 | 23,53 | 23,97 | 22,37 | 21,34 | 22,72 | 23,56 | 23,19 |
| 3 | ອັດຕາເງິນເຟີ້ ອາຫານ | 40,71 | 37,10 | 31,98 | 30,04 | 29,75 | 27,64 | 25,58 | 26,72 | 26,80 | 25,28 | 23,79 | 24,90 | 25,25 | 24,93 |
| 4 | ອັດຕາເງິນເຟີ້ ບໍ່ແມ່ນອາຫານ | 14,86 | 16,81 | 18,22 | 20,12 | 20,84 | 22,17 | 22,79 | 21,46 | 23,44 | 24,59 | 26,54 | 27,00 | 27,41 | 27,68 |
| 5 | ອັດຕາເງິນເຟີ້ ສິນຄ້າພາຍໃນ | 35,42 | 32,84 | 28,41 | 27,07 | 26,97 | 25,60 | 24,06 | 24,79 | 25,23 | 24,32 | 23,54 | 24,93 | 25,46 | 25,45 |
| 6 | ອັດຕາເງິນເຟີ້ ສິນຄ້ານໍາເຂົ້າ | 16,01 | 18,19 | 20,81 | 22,89 | 23,53 | 24,52 | 25,02 | 23,72 | 25,63 | 26,39 | 27,99 | 27,61 | 27,66 | 27,45 |

ສູນສະຖິຕິແຫ່ງຊາດ
ກະຊວງແຜນການ ແລະ ການລົງທຶນ
ບ້ານດົງນາໂຊກເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ,
ສປປລາວ
ໂທ: +85621 214 740, ແຟັກ: +85621 242 022;
ອີເມວ: lstats@lsb.gov.la
ເວບໄຊ: www.lsb.gov.la; www.laosis.gov.la